# ທ່ານຈະໃຊ້ການເຄື່ອນຍ້າຍໃຫ້ເກີດຜົນປະໂຫຍດສູງສຸດໄດ້ແນວໃດ?



## 01 ຕ້ອງມີຂໍ້ມູນ

ຊອກຮູ້ຂໍ້ມູນໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້ກ່ອນທີ່ທ່ານຈະຕັດສິນໃຈເຄື່ອນຍ້າຍ, ລວມທັງຂໍ້ມູນກ່ຽວກັບການດໍາລົງຊີວິດ ແລະ ການເຮັດວຽກຢູ່ຕ່າງປະເທດ, ຄ່າໃຊ້ຈ່າຍໃນການເຄື່ອນຍ້າຍ, ວຽກທີ່ທ່ານຈະເຮັດ, ເອກະສານທີ່ທ່ານຕ້ອງມີ, ສິ່ງທ້າທາຍທີ່ທ່ານອາດຈະພົບພໍ້, ວິທີຂໍຄວາມຊ່ວຍເຫຼືອເມື່ອທ່ານຕ້ອງການຄວາມຊ່ວຍເຫຼືອ ແລະ ວິທີການສົ່ງເງິນກັບບ້ານ.




## 02 ເອກະສານການເດີນທາງ

ທຸກຮູບແບບຂອງການເຄື່ອນຍ້າຍແຮງງານ ແມ່ນມີຄວາມສ່ຽງບາງຢ່າງ ແຕ່ຖ້າທ່ານເຄື່ອນຍ້າຍໂດຍມີໜັງສືຜ່ານແດນ, ວີຊາ ແລະ ໃບອານຸຍາດເຮັດວຽກທີ່ຖືກຕ້ອງ ທ່ານກໍ່ສາມາດຫຼີກລ່ຽງການຖືກຈັບ ແລະ ສົ່ງກັບຄືນ ຢູ່ປະເທດປາຍທາງ.



## 03 ກວດເບິ່ງຄວາມຖືກຕ້ອງຂອງບໍລິສັດຈັດຫາງານ ຫຼື ນາຍໜ້າຂອງທ່ານ

ກວດເບິ່ງບໍລິສັດຈັດຫາງານ ຫຼື ນາຍໜ້າຂອງທ່ານວ່າໄດ້ຮັບອານຸຍາດຢ່າງຖືກຕ້ອງ ແລະ ມີຊື່ສຽງດີໃນບັນດາແຮງງານເຄື່ອນຍ້າຍຜູ້ອື່ນໆທີ່ເຄີຍໃຊ້ບໍລິການຜ່ານມາ.




## 04 ເຊັນສັນຍາການຈ້າງງານເປັນລາຍລັກອັກສອນກ່ອນທີ່ທ່ານຈະອອກເດີນທາງໄປເຮັດວຽກຢູ່ຕ່າງປະເທດ

ທ່ານຄວນເຊັນສັນຍາການຈ້າງງານເປັນລາຍລັກອັກສອນກັບບໍລິສັດຈັດຫາງານ ຫຼື ນາຍຈ້າງຂອງທ່ານ ກ່ອນທີ່ທ່ານຈະອອກເດີນທາງໄປເຮັດວຽກຢູ່ຕ່າງປະເທດ. ຕ້ອງໃຫ້ແນ່ໃຈວ່າທ່ານອ່ານສັນຍາຢ່າງລະມັດລະວັງ ແລະ ເຂົ້າໃຈຂໍ້ກໍານົດ, ເງື່ອນໄຂທັງຫມົດໃນສັນຍາກ່ອນທີ່ທ່ານຈະເຊັນສັນຍາ.




## 05 ຮັກສາເອກະສານໄວ້ກັບທ່ານຕະຫຼອດເວລາ ແລະ ອັດສໍາເນົາເອກະສານເຫຼົ່ານັ້ນໄວ້

ທ່ານຕ້ອງຮັກສາເອກະສານຂອງທ່ານໄວ້ກັບໂຕ ຂອງທ່ານ ແລະ ອັດສໍາເນົາໜັງສືຜ່ານແດນ (ປັດສະປໍ), ວີຊາ, ໃບອະນຸຍາດເຮັດວຽກ, ສັນຍາຈ້າງງານ, ບັດປະຈໍາຕົວ ແລະ ເອກະສານເດີນທາງອື່ນໆ ໃນກໍລະນີ ເອກະສານເຫຼົ່ານີ້ມີການສູນຫາຍ ຫຼື ຖືກລັກ.



## 06 ກຽມພ້ອມສໍາລັບເຫດການສຸກເສີນ

ກ່ອນອອກເດີນທາງ ທ່ານຕ້ອງເຮັດບັນຊີລາຍຊື່ຕິດຕໍ່ພົວພັນທີ່ສໍາຄັນເພື່ອຕິດຕໍ່ຫາໝູ່ເພື່ອນ ແລະ ຄອບຄົວ ແລະ ຮັບປະກັນວ່າທ່ານມີເງິນພຽງພໍຢູ່ສະເໝີເພື່ອກັບບ້ານໃນກໍລະນີສຸກເສີນ.



## 07 ຕິດຕໍ່ພົວພັນກັບໝູ່ເພື່ອນ ແລະ ຄອບຄົວເປັນປົກກະຕິ

ຕິດຕໍ່ສື່ສານກັບຄອບຄົວ ແລະ ໝູ່ເພື່ອນຢູ່ທາງບ້ານເປັນປະຈໍາເພື່ອແຈ້ງໃຫ້ເຂົາເຈົ້າຮູ້ວ່າທ່ານປອດໄພ ແລະ ສ້າງເຄືອຂ່າຍກັບໝູ່ເພື່ອນທີ່ເຊື່ອໃຈໄດ້ຢູ່ປະເທດປາຍທາງ ທີ່ທ່ານສາມາດເພິ່ງພາໄດ້.



## 08 ຖ້າທ່ານພົບບັນຫາຢູ່ບ່ອນເຮັດວຽກ

ຖ້າທ່ານມີຂໍ້ຂັດແຍ່ງຢູ່ບ່ອນເຮັດວຽກ, ທ່ານຄວນຊອກຫາຂໍ້ມູນ ແລະ ການຊ່ວຍເຫຼືອຈາກຄົນທີ່ທ່ານເຊື່ອໃຈ. ຖ້າທ່ານບໍ່ສະບາຍໃຈທີ່ຈະປຶກສາກັບບໍລິສັດຈັດຫາງານ ຫຼື ນາຍຈ້າງຂອງທ່ານໂດຍກົງ, ທ່ານສາມາດຕິດຕໍ່ຫາ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ສະຫະພັນກໍາມະບານ, ສະຖານທູດຂອງທ່ານ ຫຼື ເຈົ້າໜ້າທີ່ລັດຖະບານເພື່ອຂໍຄວາມຊ່ວຍເຫຼືອ.

# ແຮງງານທີ່ເຮັດວຽກຢູ່ຂະແໜງປະມົງ ແລະ ແປຮູບອາຫານທະເລ ມີສິດອອກແຮງງານ ຢູ່ ໄທ



## 01 ຢ່າງໜ້ອຍ ທ່ານມີສິດໄດ້ຮັບເງິນຄ່າແຮງງານຂັ້ນຕໍ່າທີ່ຖືກຕ້ອງຕາມກົດໝາຍ

ແຮງງານທີ່ເຮັດວຽກຢູ່ຂະແໜງປະມົງ ແລະ ແປຮູບອາຫານທະເລທັງໝົດຕ້ອງໄດ້ຮັບຄ່າແຮງງານຢ່າງໜ້ອຍ 328-354 ບາດຕໍ່ມື້ນັບແຕ່ເດືອນ ທັນວາ 2022.



## 02 ທ່ານມີສິດທີ່ຈະໄດ້ຮັບຊົ່ວໂມງພັກຜ່ອນ ແລະ ການເຮັດວຽກເກີນໂມງ ຕ້ອງຢູ່ບົນພື້ນຖານຄວາມສະໝັກໃຈ

ຂະແໜງແປຮູບອາຫານທະເລ: ເວລາເຮັດວຽກປົກກະຕິແມ່ນ 8 ຊົ່ວໂມງຕໍ່ມື້ x 6 ມື້ຕໍ່ອາທິດ, ມີການພັກຜ່ອນຢ່າງໜ້ອຍ 1 ຊົ່ວໂມງພາຍຫຼັງເຮັດວຽກໄດ້ 5 ຊົ່ວໂມງ.

ຂະແໜງປະມົງ: ຕ້ອງໃຫ້ມີເວລາພັກຜ່ອນ 10 ຊົ່ວໂມງພາຍໃນໄລຍະເວລາ 24 ຊົ່ວໂມງ (ຢ່າງໜ້ອຍໄດ້ພັກຜ່ອນ 77 ຊົ່ວໂມງຕໍ່ອາທິດ).



## 03 ແຮງງານທີ່ເຮັດວຽກໃນຂະແໜງແປຮູບຫານທະເລ ມີສິດໄດ້ຮັບເງິນຄ່າແຮງງານເຮັດວຽກເກີນໂມງ

ຂະແໜງແປຮູບອາຫານທະເລ: ເງິນຄ່າເຮັດວຽກເກີນໂມງແມ່ນ 1.5 ທົບ ຂອງອັດຕາຄ່າຈ້າງປົກກະຕິ ຫຼັງຈາກ 8 ຊົ່ວໂມງຂອງການເຮັດວຽກຕໍ່ມື້, 48 ຊົ່ວໂມງຕໍ່ອາທິດ. ນອກຈາກນັ້ນ, ຄ່າເຮັດວຽກເກີນໂມງແມ່ນ 3 ທົບ ຂອງອັດຕາປົກກະຕິສໍາລັບການເຮັດວຽກເກີນໂມງໃນວັນພັກ.

ຂະແໜງປະມົງ: ບໍ່ມີສິດໄດ້ຮັບເງິນຄ່າເຮັດວຽກເກີນໂມງ ເນື່ອງຈາກວ່າຕາຕະລາງການເຮັດວຽກບໍ່ແນ່ນອນ.



## 04 ທ່ານມີສິດທີ່ຈະໄດ້ຮັບອຸປະກອນປ້ອງກັນສ່ວນບຸກຄົນ ແລະ ໄດ້ຮັບການຝຶກອົບຮົມກ່ຽວກັບຄວາມປອດໄພ ແລະ ສຸຂະພາບ ໂດຍບໍ່ເສຍຄ່າ

ແຮງງານທີ່ເຮັດວຽກໃນຂະແໜງປະມົງ ແລະ ແປຮູບອາຫານທະເລທັງໝົດຕ້ອງໄດ້ຮັບອຸປະກອນປ້ອງກັນສ່ວນບຸກຄົນໂດຍບໍ່ເສຍຄ່າ, ລວມທັງການຝຶກອົບຮົມທີ່ຈໍາເປັນກ່ຽວກັບສຸຂະພາບ ແລະ ຄວາມປອດໄພແຮງງານ.



## 05 ທ່ານມີສິດໄດ້ຮັບວັນພັກເຈັບເປັນ

ແຮງງານທີ່ເຮັດວຽກໃນຂະແໜງປະມົງ ແລະ ແປຮູບອາຫານທະເລທັງໝົດ ມີສິດຂໍລາພັກເຈັບເປັນສູງສຸດ 30 ມື້ຕໍ່ປີ.



## 06 ທ່ານມີສິດພັກອອກລູກໂດຍທີ່ໄດ້ຮັບຄ່າແຮງງານ

ແຮງງານທີ່ເຮັດວຽກໃນຂະແໜງປະມົງ ແລະ ແປຮູບອາຫານທະເລທັງໝົດ ມີສິດໄດ້ຮັບວັນພັກໄປຝາກທ້ອງ ແລະ ອອກລູກ 98 ມື້, ລວມທັງ 45 ມື້ທີ່ໄດ້ຮັບຄ່າແຮງງານ.



## 07 ທ່ານມີສິດທີ່ຈະໄດ້ຮັບວັນພັກປະຈໍາປີ

ຂະແໜງແປຮູບອາຫານທະເລ: ຫຼັງຈາກໜຶ່ງປີ, ທ່ານຈະໄດ້ຮັບວັນພັກປະຈໍາປີທີ່ໄດ້ຮັບຄ່າແຮງງານ 6 ວັນ. ທ່ານຍັງມີສິດໄດ້ຮັບວັນພັກບຸນປະເພນີ ທີ່ໄດ້ຮັບຄ່າແຮງງານ 13 ວັນຕໍ່ປີ.

ຂະແໜງປະມົງ: ທ່ານມີສິດໄດ້ຮັບວັນພັກປະຈໍາປີ ທີ່ໄດ້ຮັບຄ່າແຮງງານຢ່າງໜ້ອຍ 30 ວັນ ແທນວັນພັກປະຈໍາອາທິດ ແລະ ວັນພັກບຸນປະເພນີ.



## 08 ທ່ານມີສິດເຂົ້າຮ່ວມສະຫະພັນກໍາມະບານ ຫຼື ສະມາຄົມອື່ນໆ

ແຮງງານທີ່ເຮັດວຽກໃນຂະແໜງປະມົງ ແລະ ແປຮູບອາຫານທະເລທັງໝົດມີສິດເຂົ້າຮ່ວມສະຫະພັນກໍາມະບານ ຫຼື ສະມາຄົມໃນບ່ອນເຮັດວຽກຂອງທ່ານ ຫຼື ພາຍໃນຂະແໜງການເຮັດວຽກຂອງທ່ານ. ຜູ້ໃຊ້ແຮງງານຂອງທ່ານບໍ່ມີສິດເຂົ້າມາແຊກແຊງສິດທິຂອງ ທ່ານທີ່ຈະເຂົ້າຮ່ວມສະຫະພາບກໍາມະບານ ຫຼື ສະມາຄົມອື່ນໆ.

## ▶ ທ່ານສາມາດຕິດຕໍ່ໃຜໄດ້ແດ່

### ສູນຂໍ້ມູນຂ່າວສານແຮງງານເຄື່ອນຍ້າຍ

ສູນຂໍ້ມູນຂ່າວສານແຮງງານເຄື່ອນຍ້າຍ ແຂວງບໍ່ແກ້ວ
ບ້ານອຸດົມ, ຖະໜົນ R3, ເມືອງຫ້ວຍຊາຍ
ໂທ: 030 5369622
ອີເມວ : mrcborkeo@gmail.com

ສູນຂໍ້ມູນຂ່າວສານແຮງງານເຄື່ອນຍ້າຍ
ແຂວງໄຊຍະບູລີ
ບ້ານແກ້ງ, ເມືອງໄຊຍະບູລີ
ໂທ: 020 29997710; 021 211521
ອີເມວ: mrc6321xayyaboury@gmail.com

ສູນຂໍ້ມູນຂ່າວສານແຮງງານເຄື່ອນຍ້າຍ
ແຂວງຫຼວງພະບາງ
ບ້ານຈຸມຄ້ອງ, ເມືອງຫຼວງພະບາງ
ໂທ: 020 22231716; 020 3032005478
ອີເມວ : mrcluangprabang.pv@gmail.com

ສູນຂໍ້ມູນຂ່າວສານແຮງງານເຄື່ອນຍ້າຍ
ແຂວງບໍລິຄໍາໄຊ
ບ້ານທົ່ງໄຊ, ເມືອງ ປາກຊັນ, ຈຸດບໍລິການຈັດຫາງານ
ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ
ໂທ: 054 790100; 020 55531595
ອີເມວ : souksavanh6886@gmail.com ;
noy1988tmvs@gmail.com

ຂໍ້ມູນຂ່າວສານແຮງງານເຄື່ອນຍ້າຍ
ແຂວງສະຫວັນນະເຂດ
ບ້ານ ໂພນສະຫວ່າງເໜືອ, ນະຄອນໄກສອນ
ໂທ: 020 91667204; 030 2279219
ອີເມວ: mrcsavanakhet.pv@gmail.com

ສູນຂໍ້ມູນຂ່າວສານແຮງງານເຄື່ອນຍ້າຍ
ແຂວງຈໍາປາສັກ
ບ້ານສ້າງມັນ, ເມືອງປາກເຊ
ໂທ: 031 212050; 030 9913101
ອີເມວ : mrc999cps@gmail.com

ສາຍດ່ວນກໍາມະບານ
ໂທ: 1512

ສູນບໍລິການຈັດຫາງານ

ແຂວງຜົ້ງສາລີ
ໂທ: (030) 5634 114

ແຂວງອຸດົມໄຊ
ໂທ: (030) 4601 389

ແຂວງຫຼວງນໍ້າທາ
ໂທ: (030) 4826 725

ແຂງບໍ່ແກ້ວ
ໂທ: (084) 211 897

ແຂວງໄຊຍະບູລີ
ໂທ: (020) 2999 7710

ແຂວງຫຼວງພະບາງ
ໂທ: (071) 260 346

ແຂວງຫົວພັນ
ໂທ: (030) 5206 445

ແຂວງຊຽງຂວາງ
ໂທ: (030) 5067 710

ນະຄອນຫຼວງວຽງຈັນ
ໂທ: (021) 264 498

ແຂວງວຽງຈັນ
ໂທ: (023) 431 018

ແຂວງບໍລິຄໍາໄຊ
ໂທ: (054) 791 022

ແຂວງຄໍາມ່ວນ
ໂທ: (051) 212 185

ແຂວງສະຫວັນນະເຂດ
ໂທ: (030) 9696 919

ແຂວງອັດຕະປື
ໂທ: (036) 211 037

ແຂວງສາລະວັນ
ໂທ: (034) 211 045

ແຂວງຈໍາປາສັກ
ໂທ: (030) 9913 101

ແຂວງເຊກອງ
ໂທ: (030) 5622 751

ແຂວງໄຊສົມບູນ
ໂທ: (038) 211 037

ຫ້ອງການຊ່ວຍເຫຼືອແຮງງານເຄື່ອນຍ້າຍ
ແຂວງ ສາລະວັນ ແລະ ຈໍາປາສັກ
ໂທ: 034 212141; 020 91177300
ອີເມວ: nouanlamai@villagefocus.org

ເບີສາຍດ່ວນ ລັດຖະບານໄທ
ໂທ: 1506/1546/1300

### ສູນໃຫ້ການຊ່ວຍເຫຼືອແຮງງານເຄື່ອນຍ້າຍຂອງລັດຖະບານ

ຫ້ອງການຈັດຫາງານ ຈັງຫວັດສະມຸດສາຄອນ
ຊັ້ນ 3, ເລກທີ. 32-33 ຖະໜົນເອກະໄຊ, ມະຫາໄຊ
ເມືອງສະໝຸດສາຄອນ.
ໂທ: 034-836223-25 ແລະ 061-4078766

ຫ້ອງການຈັດຫາງານຈັງຫວັດສະໝຸດປຣາການ
176 ໝູ່ 8, ອາຄານ A, ຊັ້ນ 2, ເມືອງ ຕະຫຼາດທິບນິມິດ
ບາງພີໃຫຍ່, ສະໝຸດປາການ 10540.
ໂທ: 02-395-5992

ຫ້ອງການຈັດຫາງານຈັງຫວັດຣະນອງ
55/8 ໝູ່ 3 ຕໍາບົນ ບາງຣິ້ນ, ເມືອງ ຣະນອງ 85000
ໂທ: 077-862026-8

ຫ້ອງການຈັດຫາງານ ຈັງຫວັດສຸຣາດທານີ
ຖະໜົນສຸຣາດ-ນາສານ, ຕໍາບົນ ຂຸນທະແລ
ເມືອງ ສຸຣາດທານີ 84100
ໂທ.077-355426

ຫ້ອງການຈັດຫາງານຈັງຫວັດສົງຂາ
ຕຶກເກົ່າ ສໍາພະກອນ, ຊັ້ນ 2, ຫ້ອງວ່າການປົກຄອງເມືອງສົງຂາ
ຖະໜົນລາດສະດໍາ, ຕໍາບົນ ບໍ່ຢາງ, ເມືອງ ສົງຂາ
ໂທ: 074-314845, 093-0021671 (ຜູ້ປະສານງານ)

ຫ້ອງການຈັດຫາງານຈັງຫວັດຕາກ
ສາຂາແມ່ສອດ , 149 ໝູ່.2, ທ່າໄຊວຸດ
ຄໍາແພງເມືອງ, ເມືອງ ແມ່ສອດ, 63110
ໂທ: 055-563639, 096-6696288 (ຜູ້ປະສານງານ)

ຫ້ອງການຈັດຫາງານຈັງຫວັດຊົນບູລີ
199 ໝູ່.3, ຕໍາບົນສະເມັດ, ເມືອງຊົນບູລີ 20000
ໂທ: 038-398053

ຫ້ອງການຈັດຫາງານຈັງຫວັດນະຄອນຣາຊສີມາ
364 ຖະໜົນສັບສິລິ, ຕໍາບົນ ໃນເມືອງ, ເມືອງ ນະຄອນຣາຊສີມາ
ໂທ: 044-355265-7

### ສູນຂໍ້ມູນຂ່າວສານແຮງງານເຄື່ອນຍ້າຍ

ຣັກໄທ - ສະໝຸດປຣາການ
80/403 ຊອຍ.45 ທິບພະວັນ 1, ໃຍເທບພະລັກ
ເມືອງ ສະໝຸດປຣາການ
ໂທ: 023801123

ມູນນິທິຣັກໄທ - ກຸງເທບ
185 ຊອຍປະດິພັດ 6 ພະຍາໄທ, ກຸງເທບ
ໂທ: 022656888

ຄຣີນິກກົດໝາຍແຮງງານ / ສິດທິມະນຸດ
ມູນນິທິຄຸ້ມຄອງ ແລະ ການພັດທະນາ – ແມ່ສອດ
134/31 ຖະໜົນອິນທາຄີລີ, ເມືອງແມ່ສອດ, ຈັງຫວັດ ຕາກ 63110
ໂທ: 055535994, 0892734711 (ໄທ) | ແຟັກ: 055536015

ຫ້ອງການ HRDF - ກຸງເທບ
109 ຊອຍສິດທິຊົນ, ຖະໜົນສຸດທິສານວິນິໄຊ, ສາມເສນນອກ
ຫ້ວຍຂວາງ, ກຸງເທບ, 10310
ໂທ: 022776882 | ແຟັກ: 022776887

ສະຫະພັນກໍາມະບານໄທ-ສະໝຸດປຣາການ
420/393-4 ທິບພະວັນ 1, ຖະໜົນ ທິບພະລັກ
ສະໝຸດປຣາການ
ໂທ: 023840438, 0830206972 (ໄທ)

ມູນນິທິ ເພື່ອການມີວຽກເຮັດງານທໍາ ແລະ ສົ່ງເສີມແຮງງານ-ກຸງເທບ
677/6 ລາດພ້າວ 5/1 ຈອມພົງ, ຈະຈຸຈັກ, ກຸງເທບ, 10900
ໂທ: 025139242, 0853272971

ມູນນິທິ ແມັບ (MAP) - ຈັງຫວັດ ຊຽງໃໝ່
63/30 30 ອຸມົງ ຊອຍ 4, ໝູ່ 8 ຕໍາບົນ ສຸເທບ
ເມືອງ ຊຽງໃໝ່, 50200
ໂທ: 053811202; 0869219139 (ໄທໃຫຍ່), 0863690762 (ໄທ)

ມີນນິທິ ຊຽງຣາຍ MWG (ມູນນິທິ ສັນຍິບ)
3510 ຖະໜົນດິນແດງ, ແຂວງ ດິນແດງ, ກຸງເທບ.
ອີເມວ: manager@mwgthailand.org

ເຄືອຂ່າຍສິດທິຊາວປະມົງ - ຈັງຫວັດ ສົງຂາ
27 ໄຊງາມ, ຊອຍ 4 ຖະໜົນ ສວນໝາກ, ຕໍາບົນ ບໍ່ຢາງ
ເມືອງ ສົງຂາ 90000
ໂທ: 074314262

ເຄືອຂ່າຍສິດທິຊາວປະມົງ - ຈັງຫວັດ ຊຸມພອນ
385/16 ໝູ່2 ຕໍາບົນ ປາກນໍ້າ, ເມືອງ ຊຸມພອນ 86120

ເຄືອຂ່າຍສິດທິຊາວປະມົງ - ຈັງຫວັດ ຣະນອງ
73/25 ຊອຍ 5 ຕໍາບົນ ບາງຣິ້ນ, ເມືອງ ຣະນອງ 85000
ໂທ: 077810217

ເຄືອຂ່າຍສິດທິຊາວປະມົງ - ຈັງຫວັດ ຕຣາດ
305/2 ໝູ່ 5, ຕໍາບົນ ຫາດເລັກ, ເມືອງ ຄອງໃຫຍ່, ຕຣາດ, 23110
ໂທ: 039513500

SHIP TO SHORE RIGHTS | SOUTH EAST ASIA
International Labour Organization
Funded by the European Union

# ທ່ານຄິດຢາກໄປເຮັດວຽກຢູ່ຕ່າງປະເທດ ໃນຂະແໜງປະມົງ ຫຼື ແປຮູບອາຫານທະເລບໍ?



**ຂໍ້ມູນນີ້ ຈະຊ່ວຍໃຫ້ທ່ານເດີນທາງໄປຕ່າງປະເທດຢ່າງປອດໄພ ແລະ ຊອກວຽກທີ່ມີຄຸນຄ່າ ແລະ ເປັນທໍາ.**

ການເຄື່ອນຍ້າຍໄປເຮັດວຽກ ອາດເປັນປະໂຫຍດສໍາລັບທ່ານ. ຄໍາແນະນໍາຕໍ່ໄປນີ້ ແມ່ນເພື່ອການເຄື່ອນຍ້າຍແບບປອດໄພ ແລະ ເຮັດວຽກຢູ່ຕ່າງປະເທດໃຫ້ເກີດຜົນປະໂຫຍດສູງສຸດ.